ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 461 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 03 ມິຖຸນາ 2019

# ຂໍ້ຕົກລົງ
# ວ່າດ້ວຍ ການດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມກ່ຽວຂ້ອງ.

## ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດບັນດາຫຼັກການ, ລະບຽບການ ແລະ ຂັ້ນຕອນໃນການຂໍອະນຸຍາດດຳເນີນທຸລະກິດ ແລະ ຂອບເຂດການເຄື່ອນໄຫວກ່ຽວກັບການດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ ເພື່ອຜັນຂະຫຍາຍເນື້ອໃນຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ, ແນໃສ່ເຮັດໃຫ້ການດຳເນີນທຸລະກິດມີປະສິດທິຜົນ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ທັງເປັນການດຶງດູດການລົງທຶນຈາກຕ່າງປະເທດ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ທຸລະກິດນຳເຂົ້າ-ສົ່ງອອກ ຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ**

**ຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ** ແມ່ນ ຄຳບໍລິສຸດ ທີ່ໄດ້ມາດຕະຖານ 99,99%.

**ທຸລະກິດນຳເຂົ້າ-ສົ່ງອອກ ຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ** ແມ່ນການດຳເນີນທຸລະກິດຂອງຫົວໜ່ວຍທຸລະກິດ ທີ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ໃນການນຳເຂົ້າ-ສົ່ງອອກ ຄຳ ກັບຕ່າງປະເທດ ເພື່ອຊື້-ຂາຍ ກັບຫົວໜ່ວຍທຸລະກິດປຸງແຕ່ງ ວັດຖຸມີຄ່າ ຢູ່ພາຍໃນປະເທດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

- **ຄຳ** ໝາຍເຖິງ ຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ.
- **ຜູ້ດຳເນີນທຸລະກິດ** ໝາຍເຖິງ ຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ ຈາກທະນາຄານແຫ່ງ ສປປ ລາວ.
- **ທຸລະກິດນຳເຂົ້າ-ສົ່ງອອກ ຄຳ** ໝາຍເຖິງ ການດຳເນີນທຸລະກິດ ໃນຮູບແບບ ບໍລິສັດ ຈຳກັດ ເພື່ອດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະລະຫວ່າງປະເທດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຜູ້ສະເໜີຂໍອະນຸຍາດດຳເນີນທຸລະກິດ ແລະ ຜູ້ດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ຢູ່ ສປປ ລາວ.

## ໝວດທີ 2
## ການດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ

**ມາດຕາ 5 ທຶນຈົດທະບຽນ**

ການດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ຕ້ອງປະກອບທຶນຈົດທະບຽນຕ່ຳສຸດ ຈຳນວນ 20.000.000.000 (ຊາວຕື້) ກີບ, ໃນນັ້ນ ເປັນທຶນໝູນວຽນຕ່ຳສຸດ ຈຳນວນ 80% ແລະ ຊັບສິນຄົງທີ່ສູງສຸດ ຈຳນວນ 20%. ສຳລັບທຶນໝູນວຽນດັ່ງກ່າວ ຕ້ອງເປັນທຶນທີ່ມີແຫຼ່ງທີ່ມາຂອງເງິນທຶນຢ່າງຈະແຈ້ງ ແລະ ຖືກຕ້ອງຕາມກົດໝາຍ ແລະ ຕ້ອງນຳມາຝາກໄວ້ນຳທະນາຄານທຸລະກິດ ຢູ່ ສປປ ລາວ. ທຶນຈົດທະບຽນ ສາມາດຖອນ ແລະ ນຳໃຊ້ ເພື່ອດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ແລະ ປະກອບວັດຖຸເຕັກນິກ ນັບແຕ່ວັນທີ່ ໄດ້ຮັບການອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ເປັນຕົ້ນໄປ ແລະ ຕ້ອງນຳໃຊ້ເຂົ້າໃນການດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ເທົ່ານັ້ນ.

**ມາດຕາ 6 ເງື່ອນໄຂຂອງການອະນຸຍາດດຳເນີນທຸລະກິດ**

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາອະນຸຍາດໃຫ້ດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ແກ່ຜູ້ສະເໜີຂໍອະນຸຍາດ ບົນພື້ນຖານເງື່ອນໄຂ ດັ່ງນີ້:

1. ໄດ້ຮັບການຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ;
2. ມີທຶນຈົດທະບຽນຄົບຖ້ວນ ແລະ ຖືກຕ້ອງຕາມກົດໝາຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້;
3. ມີແຜນດຳເນີນທຸລະກິດ ທີ່ມີປະສິດທິຜົນ;
4. ມີສະຖານທີ່ຕັ້ງສຳນັກງານທີ່ເໝາະສົມ ແລະ ຮັບປະກັນຄວາມປອດໄພໃນການບໍລິການ;
5. ບໍ່ເຄີຍຖືກສານຕັດສິນລົງໂທດໃນສະຖານຍັກຍອກຊັບ ຫຼື ສໍ້ໂກງຊັບ;
6. ບໍ່ເຄີຍຖືກຖອນໃບອະນຸຍາດດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ຄຳ ມາກ່ອນ.

**ມາດຕາ 7 ການຍື່ນສຳນວນຄຳຮ້ອງ**

ຜູ້ທີ່ມີຈຸດປະສົງຕ້ອງການດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ຄຳ ຕ້ອງຍື່ນສຳນວນຄຳຮ້ອງ ສະເໜີ ຂໍອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ນຳກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ພາຍຫຼັງໄດ້ຮັບອະນຸຍາດຂຶ້ນທະບຽນວິສາຫະກິດ ໂດຍຕ້ອງປະກອບສຳນວນເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ສະເໜີຂໍດຳເນີນທຸລະກິດ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;
2. ຊີວະປະຫວັດຂອງຜູ້ອຳນວຍການ ຫຼື ຜູ້ຖືຮຸ້ນ;
3. ແຜນການດຳເນີນທຸລະກິດ;
4. ໃບຢັ້ງຢືນຖານະການເງິນ ແລະ ໃບລາຍງານບັນຊີສຳຮອງ (Statement);

5. ສຳເນົາໃບທະບຽນວິສາຫະກິດ ແລະ ສຳເນົາໜັງສືແຈ້ງເຈດຈຳນົງ ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ (ນຳສະບັບກາແດງມາຢັ້ງຢືນ);
6. ໂຄງຮ່າງການຈັດຕັ້ງ ແລະ ກົດລະບຽບພາຍໃນຂອງບໍລິສັດ;
7. ແຜນວາດທີ່ຕັ້ງສຳນັກງານ ທີ່ໄດ້ຮັບການຢັ້ງຢືນ ຈາກອົງການປົກຄອງບ້ານ;
8. ໃບຢັ້ງຢືນທີ່ຢູ່ (ສຳລັບບຸກຄົນລາວ);
9. ໃບແຈ້ງໂທດ (ສຳລັບບຸກຄົນລາວ);
10. ສຳເນົາບັດປະຈຳຕົວ (ສຳລັບບຸກຄົນລາວ);
11. ສຳເນົາໜັງສືຜ່ານແດນ (ສຳລັບນັກລົງທຶນຕ່າງປະເທດ);
12. ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກນຳທະນາຄານແຫ່ງ ສປປ ລາວ (ກໍລະນີຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົນເອງ);
13. ຮູບຖ່າຍຂອງຜູ້ສະເໜີ ຂະໜາດ 3X4 ຈຳນວນ 3 ໃບ (ບໍ່ເກີນ 90 ວັນ).

**ມາດຕາ 8 ການຕໍ່ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ມີຜົນນຳໃຊ້ໄດ້ໃນໄລຍະເວລາ 1 ປີ ນັບແຕ່ ເດືອນ ມັງກອນ ເຖິງ ເດືອນ ທັນວາ ຂອງທຸກໆປີ.

ຜູ້ດຳເນີນທຸລະກິດ ທີ່ມີຈຸດປະສົງສືບຕໍ່ດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ຕ້ອງສະເໜີຂໍຕໍ່ໃບອະນຸຍາດດຳເນີນທຸລະກິດ ນຳກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ກ່ອນໃບອະນຸຍາດໝົດອາຍຸ 30 ວັນ ໂດຍປະກອບສຳນວນເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍຕໍ່ໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ຕາມແບບພິມຂອງ ທະນາຄານແຫ່ງ ສປປ ລາວ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ປະຈຳປີ;
3. ສຳເນົາໃບທະບຽນວິສາຫະກິດ;
4. ໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ;
5. ເອກະສານລາຍງານທາງການເງິນປະຈຳປີ ຫຼື ບົດສະຫຼຸບບັນຊີ ປະຈຳປີ;
6. ໃບລາຍງານບັນຊີສຳຮອງ ຢູ່ທະນາຄານທຸລະກິດ ທີ່ມີການເຄື່ອນໄຫວໄລຍະ 1 ປີ ຍ້ອນຫຼັງ;
7. ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກນຳທະນາຄານແຫ່ງ ສປປ ລາວ (ກໍລະນີ ຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົນເອງ);
8. ຮູບຖ່າຍຂອງຜູ້ສະເໜີ ຂະໜາດ 3X4 ຈຳນວນ 2 ໃບ (ບໍ່ໃຫ້ກາຍ 90 ວັນ).

**ມາດຕາ 9 ການປ່ຽນແປງທຶນຈົດທະບຽນ**

ຜູ້ດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ທີ່ມີຈຸດປະສົງປ່ຽນແປງທຶນຈົດທະບຽນ ສາມາດສະເໜີຂໍອະນຸຍາດປ່ຽນແປງທຶນຈົດທະບຽນ ນຳກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ໂດຍຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍປ່ຽນແປງທຶນຈົດທະບຽນ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ປະຈຳປີ;
3. ສຳເນົາໃບທະບຽນວິສາຫະກິດ;
4. ໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ ຫຼື ບົດສະຫຼຸບບັນຊີປະຈຳປີ;
5. ໃບລາຍງານບັນຊີສຳຮອງ ຢູ່ທະນາຄານ ທີ່ມີການເຄື່ອນໄຫວໄລຍະ 1 ປີ ຍ້ອນຫຼັງ;
6. ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກນຳທະນາຄານແຫ່ງ ສປປ ລາວ (ກໍລະນີ ຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົນເອງ);

7. ຮູບ 3X4 ຈຳນວນ 2 ໃບ (ບໍ່ໃຫ້ກາຍ 3 ເດືອນ);

**ມາດຕາ 10 ການປ່ຽນສະຖານທີ່ຕັ້ງຂອງບໍລິສັດນຳເຂົ້າ-ສົ່ງອອກ ຄຳ**

ຜູ້ດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ທີ່ມີຄວາມຈຳເປັນຕ້ອງປ່ຽນສະຖານທີ່ຕັ້ງຂອງບໍລິສັດ ຕ້ອງສະເໜີຂໍປ່ຽນສະຖານທີ່ຕັ້ງຂອງບໍລິສັດ ນຳກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ເພື່ອພິຈາລະນາ ລ່ວງໜ້າ 30 ວັນ ແລະ ຕ້ອງປະກອບສຳນວນເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ສະເໜີປ່ຽນສະຖານທີ່ຕັ້ງບໍລິສັດ;
2. ສຳເນົາໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ປະຈຳປີ;
3. ສຳເນົາໃບທະບຽນວິສາຫະກິດ;
4. ໃບຢັ້ງຢືນທີ່ຕັ້ງ ແລະ ແຜນວາດທີ່ຕັ້ງສຳນັກງານໃໝ່ ຈາກອົງການປົກຄອງບ້ານ;
5. ໃບມອບສິດໃຫ້ຜູ້ຕາງໜ້າມາພົວພັນວຽກນຳທະນາຄານແຫ່ງ ສປປ ລາວ (ກໍລະນີ ຜູ້ສະເໜີບໍ່ສາມາດມາພົວພັນດ້ວຍຕົນເອງ);
6. ຮູບຖ່າຍຂອງຜູ້ສະເໜີ ຂະໜາດ 3X4 ຈຳນວນ 2 ໃບ (ບໍ່ໃຫ້ກາຍ 90 ວັນ).

**ມາດຕາ 11 ການພິຈາລະນາການສະເໜີຂໍອະນຸຍາດ**

ທະນາຄານແຫ່ງ ສປປ ລາວ ຈະຄົ້ນຄວ້າ ພິຈາລະນາ ແລະ ແຈ້ງຕອບຜົນການສະເໜີຂໍອະນຸຍາດດຳເນີນ ທຸລະກິດນຳເຂົ້າ-ສົ່ງອອກ ຄຳ ພາຍໃນກຳນົດເວລາ 30 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບສຳນວນຄຳຮ້ອງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ການຕໍ່ໃບອະນຸຍາດດຳເນີນທຸລະກິດ, ການປ່ຽນແປງທຶນຈົດທະບຽນ, ການດັດແກ້ຂໍ້ມູນໃນໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ຈະຄົ້ນຄວ້າພິຈາລະນາ ແລະ ແຈ້ງຕອບຜົນການຄົ້ນຄວ້າຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ 15 ວັນລັດຖະການ ນັບແຕ່ວັນໄດ້ຮັບສຳນວນຄຳຮ້ອງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

ນອກຈາກເອກະສານທີ່ໄດ້ກຳນົດໄວ້ໃນມາດຕາ 7-10 ຂອງຂໍ້ຕົກລົງສະບັບນີ້ ເຫັນວ່າຂໍ້ມູນທີ່ໄດ້ມາຍັງບໍ່ພຽງພໍໃນການຄົ້ນຄວ້າພິຈາລະນາ, ທະນາຄານແຫ່ງ ສປປ ລາວ ສາມາດຮຽກເອົາເອກະສານອື່ນທີ່ກ່ຽວຂ້ອງ.

ທະນາຄານແຫ່ງ ສປປ ລາວ ຈະແຈ້ງຕອບປະຕິເສດ ການສະເໜີຂໍອະນຸຍາດ, ການຕໍ່ໃບອະນຸຍາດ, ການປ່ຽນແປງທຶນຈົດທະບຽນ, ການດັດແກ້ຂໍ້ມູນໃນໃບອະນຸຍາດດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ຄຳ ທີ່ບໍ່ຄົບຕາມເງື່ອນໄຂ ຫຼື ປະກອບເອກະສານບໍ່ຄົບຖ້ວນຕາມທີ່ກຳນົດໄວ້ໃນມາດຕາ 7-10 ຂອງຂໍ້ຕົກລົງສະບັບນີ້ ຢ່າງເປັນລາຍລັກອັກສອນ ແລະ ສົ່ງເອກະສານທີ່ໄດ້ປະກອບທັງໝົດ ຄືນໃຫ້ຜູ້ສະເໜີ. ຜູ້ສະເໜີທີ່ຖືກປະຕິເສດສາມາດຍື່ນສຳນວນຄຳຮ້ອງ ແລະ ປະກອບເອກະສານຄືນໃໝ່ ພ້ອມທັງຊີ້ແຈງເຫດຜົນ ເຖິງທະນາຄານແຫ່ງ ສປປ ລາວ ເພື່ອຄົ້ນຄວ້າພິຈາລະນາຄືນບົນພື້ນຖານເງື່ອນໄຂ ແລະ ການປະກອບເອກະສານທີ່ກຳນົດໄວ້.

ຜູ້ສະເໜີຂໍອະນຸຍາດ ແລະ ຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ຄຳ ຕ້ອງເສຍຄ່າຄົ້ນຄວ້າເອກະສານ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ຈຳນວນ 200.000 ກີບ ຕໍ່ຊຸດ;
2. ການອອກໃບອະນຸຍາດດຳເນີນທຸລະກິດໃໝ່ ຈຳນວນ 0,01% (ສູນຈຸດສູນໜຶ່ງສ່ວນຮ້ອຍ) ຂອງທຶນຈົດທະບຽນ, ແຕ່ສູງສຸດ ບໍ່ເກີນ 5.000.000 ກີບ (ຫ້າລ້ານກີບ);
3. ຕໍ່ໃບອະນຸຍາດດຳເນີນທຸລະກິດປະຈຳປີ ຈຳນວນ 2.000.000 ກີບ;
4. ການປ່ຽນແປງທຶນຈົດທະບຽນ ແລະ ດັດແກ້ຂໍ້ມູນໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ຈຳນວນ 300.000 ກີບ.

**ມາດຕາ 12 ການໂຈະ ແລະ ການຖອນໃບອະນຸຍາດດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ຄຳ**

ຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ສາມາດສະເໜີຂໍໂຈະການດຳເນີນທຸລະກິດຊົ່ວຄາວພາຍໃນກຳນົດ 90 ວັນ ໂດຍຕ້ອງມີເຫດຜົນຢັ້ງຢືນຄວາມຈຳເປັນໃນການໂຈະ ແລະ ຖ້າເກີນກຳນົດເວລາດັ່ງກ່າວ ຫາກບໍ່ມີການສືບຕໍ່ດຳເນີນທຸລະກິດ ແມ່ນຈະຖືກຖອນໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ.

ທະນາຄານແຫ່ງ ສປປ ລາວ ຈະຖອນໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ໃນກໍລະນີດັ່ງນີ້:

1. ບໍ່ດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ເປັນເວລາ 90 ວັນ ຕິດຕໍ່ກັນ ໂດຍບໍ່ມີເຫດຜົນ ຫຼື ບໍ່ແຈ້ງໃຫ້ ທະນາຄານແຫ່ງ ສປປ ລາວ ຮັບຊາບ;
2. ໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ໝົດອາຍຸເກີນ 90 ວັນ;
3. ຖືກປະຕິບັດມາດຕະການປັບໃໝແລ້ວ ແຕ່ຍັງສືບຕໍ່ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ບໍລິສັດເຄື່ອນໄຫວຂາດທຶນ ຢ່າງຕໍ່ເນື່ອງ 3 ປີ ແລະ ບໍ່ສາມາດແກ້ໄຂໄດ້;
5. ມີຄຳຕັດສິນຈາກສານປະຊາຊົນ ໃຫ້ລົ້ມລະລາຍ;
6. ຜູ້ດຳເນີນທຸລະກິດຂໍຍຸບເລີກດ້ວຍຄວາມສະໝັກໃຈ.

## ໝວດທີ 3
## ການນຳເຂົ້າ-ສົ່ງອອກ ແລະ ການຊື້-ຂາຍ ຄຳ

**ມາດຕາ 13 ການນຳເຂົ້າ-ສົ່ງອອກ ຄຳ**

ການນຳເຂົ້າ ຫຼື ສົ່ງອອກ ຄຳ ຕົວຈິງ, ຜູ້ໄດ້ຮັບອະນຸຍາດດຳເນີນທຸລະກິດ ຕ້ອງສະແດງເອກະສານ ໃບອະນຸຍາດ ແລະ ເອກະສານທີ່ກ່ຽວຂ້ອງ ໃຫ້ແກ່ເຈົ້າໜ້າທີ່ພາສີປະຈຳດ່ານສາກົນ ເພື່ອດຳເນີນການນຳເຂົ້າ ຫຼື ສົ່ງອອກ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 14 ການຊື້-ຂາຍ ຄຳ**

- ການຊື້-ຂາຍ ເປັນຮູບແບບຄຳ ທັງຂາຍຍົກ ຫຼື ຂາຍຍ່ອຍ ຢູ່ພາຍໃນ ແລະ ຕ່າງປະເທດ;
- ການຊື້-ຂາຍ ຄຳ ຢູ່ພາຍໃນ ສປປ ລາວ ຕ້ອງຊຳລະເປັນເງິນກີບ ແລະ ຕ້ອງມີໃບຮັບເງິນໃນແຕ່ລະຄັ້ງທີ່ມີການຊື້-ຂາຍ;
- ການສັ່ງຊື້-ຂາຍ ຄຳ ກັບຕ່າງປະເທດ ຕ້ອງສຳເນົາໃບແຈ້ງລາຄາສິນຄ້າໃນແຕ່ລະຄັ້ງທີ່ມີການຊື້-ຂາຍ;
- ການຊື້-ຂາຍ ຄຳ ຢູ່ພາຍໃນ ແລະ ຕ່າງປະເທດ ຕ້ອງຊຳລະຜ່ານລະບົບທະນາຄານ;
- ການຊື້-ຂາຍ ຄຳ ແຕ່ລະຄັ້ງ ຕ້ອງເກັບໃບແຈ້ງລາຄາ ແລະ ໃບຮັບເງິນທຸກຄັ້ງ ເພື່ອເປັນເອກະສານຢັ້ງຢືນການລົງບັນຊີ.

**ມາດຕາ 15 ການຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ຄຳ**

ຜູ້ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ນຳເຂົ້າ-ສົ່ງອອກ ຄຳ ທີ່ມີຈຸດປະສົງນຳເຂົ້າ ຫຼື ສົ່ງອອກ ຄຳ ຕ້ອງສະເໜີຂໍອະນຸຍາດ ນຳກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ທຸກຄັ້ງ ໂດຍຕ້ອງປະກອບສຳນວນເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍອະນຸຍາດນຳເຂົ້າ ຫຼື ສົ່ງອອກ ຄຳ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;
2. ໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ປະຈຳປີ;
3. ໃບທະບຽນວິສາຫະກິດ;
4. ໃບສັ່ງຊື້ສິນຄ້າ ຫຼື ໃບແຈ້ງລາຄາສິນຄ້າ (Invoice);
5. ໃບຫຸ້ມຫໍ່ສິນຄ້າ (Packing).

**ມາດຕາ 16 ການພິຈາລະນາ**

ທະນາຄານແຫ່ງ ສປປ ລາວ ຈະຄົ້ນຄວ້າພິຈາລະນາອອກໃບອະນຸຍາດນໍາເຂົ້າ ຫຼື ສົ່ງອອກ ຄໍາ ພາຍໃນກໍານົດເວລາ 3 ວັນລັດຖະການ ນັບແຕ່ວັນໄດ້ຮັບສໍານວນຄໍາຮ້ອງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

ໃບອະນຸຍາດນໍາເຂົ້າ-ສົ່ງອອກ ຄໍາ ມີຜົນນໍາໃຊ້ໄດ້ໃນໄລຍະເວລາ 7 ວັນ ນັບແຕ່ວັນໄດ້ຮັບອະນຸຍາດນໍາເຂົ້າ-ສົ່ງອອກ ຄໍາ ຈາກທະນາຄານແຫ່ງ ສປປ ລາວ ເປັນຕົ້ນໄປ. ໃນກໍລະນີທີ່ບໍ່ໄດ້ນໍາເຂົ້າ ຫຼື ສົ່ງອອກຕາມກໍານົດເວລາດັ່ງກ່າວ ບໍລິສັດຕ້ອງແຈ້ງໃຫ້ ກົມນະໂຍບາຍເງິນຕາ ຊາບ ແລະ ຕ້ອງສະເໜີຂໍຕໍ່ເວລາຕາມລະບຽບການ.

ຜູ້ທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດ ນໍາເຂົ້າ-ສົ່ງອອກ ຄໍາ ຕ້ອງເສຍຄ່າຄົ້ນຄວ້າເອກະສານ ໃນການອອກໃບອະນຸຍາດນໍາເຂົ້າ ຫຼື ສົ່ງອອກ ຄໍາ ຈໍານວນ 50.000 ກີບ ຕໍ່ຄັ້ງ.

## ໝວດທີ 4
## ສິດ ແລະ ໜ້າທີ່ ຂອງຜູ້ດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກ ຄໍາ

**ມາດຕາ 17 ສິດຂອງຜູ້ດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກ ຄໍາ**

ຜູ້ດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກ ຄໍາ ມີສິດ ດັ່ງນີ້:

1. ນໍາເຂົ້າ ຄໍາບໍລິສຸດ ທີ່ໄດ້ມາດຕະຖານ 99,99% ຈາກຕ່າງປະເທດ;
2. ສົ່ງອອກ ຄໍາບໍລິສຸດ ທີ່ໄດ້ມາດຕະຖານ 99,99% ໄປຂາຍຢູ່ຕ່າງປະເທດ;
3. ຊື້-ຂາຍ ຄໍາ ຢູ່ພາຍໃນປະເທດ ຂາຍຍົກ-ຂາຍຍ່ອຍ ເປັນເງິນກີບ ທັງເງິນສົດ ແລະ ເງິນໂອນ;
4. ເປີດບັນຊີເງິນຝາກນໍາທະນາຄານທຸລະກິດ ຢູ່ ສປປ ລາວ ເພື່ອຮອງຮັບການດໍາເນີນທຸລະກິດ;
5. ປະຕິບັດຕາມຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນ ຢ່າງເຂັ້ມງວດ.

**ມາດຕາ 18 ໜ້າທີ່ຂອງຜູ້ດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກ ຄໍາ**

ຜູ້ດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກ ຄໍາ ມີໜ້າທີ່ ດັ່ງນີ້:

1. ຂໍອະນຸຍາດນໍາເຂົ້າ-ສົ່ງອອກ ຄໍາ ນໍາທະນາຄານແຫ່ງ ສປປ ລາວ ທຸກຄັ້ງທີ່ມີການນໍາເຂົ້າ-ສົ່ງອອກ;
2. ຕໍ່ໃບອະນຸຍາດດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກ ຄໍາ ປະຈໍາປີ;
3. ຕິດລາຄາ ແລະ ຮັບ-ຊໍາລະ ຄ່າສິນຄ້າ ເປັນເງິນກີບຢູ່ພາຍໃນ ສປປ ລາວ;
4. ຕິດປ້າຍບໍລິສັດຕາມລະບຽບການທີ່ຂະແໜງການກ່ຽວຂ້ອງໄດ້ກໍານົດໄວ້;
5. ຕິດໃບອະນຸຍາດດໍາເນີນທຸລະກິດ ນໍາເຂົ້າ-ສົ່ງອອກ ຄໍາ ຂອງຕົນໄວ້ບ່ອນທີ່ເປີດເຜີຍ ແລະ ເຫັນໄດ້ງ່າຍ;
6. ເປີດບັນຊີເງິນຝາກ ທັງເປັນເງິນກີບ ແລະ ເງິນຕາຕ່າງປະເທດໄວ້ນໍາທະນາຄານທຸລະກິດ ຢູ່ ສປປ ລາວ ເພື່ອອໍານວຍຄວາມສະດວກໃຫ້ແກ່ການດໍາເນີນທຸລະກິດຂອງຕົນ;
7. ປະຕິບັດພັນທະພາສີ-ອາກອນ ຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງຢ່າງເຂັ້ມງວດ;
8. ປະຕິບັດໜ້າທີ່ອື່ນຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 5
## ການບັນຊີ, ການກວດກາ ແລະ ການລາຍງານ

**ມາດຕາ 19 ລະບົບການບັນຊີ**

ບໍລິສັດນໍາເຂົ້າ-ສົ່ງອອກ ຄໍາ ຕ້ອງປະຕິບັດລະບົບການບັນຊີຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ເພື່ອຕິດຕາມການດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກ ຄໍາ.

**ມາດຕາ 20 ການຄຸ້ມຄອງ ແລະ ການກວດກາ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄຸ້ມຄອງ, ຕິດຕາມ, ກວດກາການເຄື່ອນໄຫວ ແລະ ການຈັດຕັ້ງປະຕິບັດລະບຽບການ ຂອງບໍລິສັດນໍາເຂົ້າ-ສົ່ງອອກ ຄໍາ ເປັນປະຈໍາເດືອນ, ໄຕມາດ, ປີ ແລະ ເມື່ອເຫັນວ່າມີຄວາມຈໍາເປັນ.

**ມາດຕາ 21 ການລາຍງານ**

ບໍລິສັດນໍາເຂົ້າ-ສົ່ງອອກ ຄໍາ ຕ້ອງປະຕິບັດການລາຍງານ ໃຫ້ທະນາຄານແຫ່ງ ສປປ ລາວ ດັ່ງນີ້:

1. ປະຕິບັດລະບອບລາຍງານດ້ານການບັນຊີ-ການເງິນ ຕາມລະບອບການບັນຊີຂອງກະຊວງການເງິນກໍານົດໄວ້ຢ່າງເຂັ້ມງວດ;
2. ຕ້ອງລາຍງານການນໍາເຂົ້າ ຫຼື ສົ່ງອອກ ຄໍາ ໃຫ້ທະນາຄານແຫ່ງ ສປປ ລາວ ຊາບ ພາຍໃນກໍານົດເວລາ 3 ວັນ ພາຍຫຼັງທີ່ມີການນໍາເຂົ້າ ຫຼື ສົ່ງອອກ ຄໍາ ຕົວຈິງ.

## ໝວດທີ 6
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 22 ຂໍ້ຫ້າມ**

ຫ້າມຜູ້ດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກ ຄໍາ ມີພຶດຕິກໍາ ດັ່ງນີ້:

1. ນໍາເຂົ້າ-ສົ່ງອອກ ຄໍາ ໂດຍບໍ່ໄດ້ຮັບອະນຸຍາດ;
2. ເປີດບັນຊີເງິນຝາກ ກັບທະນາຄານທຸລະກິດຢູ່ຕ່າງປະເທດ;
3. ໃຫ້ບໍລິການ ແລະ/ຫຼື ເປັນທີ່ປຶກສາການຊື້-ຂາຍ ດັດສະນີຄໍາ ຢູ່ຕະຫຼາດສາກົນ;
4. ໃບອະນຸຍາດດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກ ຄໍາ ໝົດອາຍຸເກີນ 30 ວັນ;
5. ມອບໃບອະນຸຍາດດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກ ຄໍາ ຂອງຕົນໃຫ້ບຸກຄົນອື່ນນໍາໃຊ້ ເພື່ອຈຸດປະສົງໃດກໍ່ຕາມ;
6. ປ່ຽນສະຖານທີ່ຕັ້ງບໍລິສັດໂດຍບໍ່ໄດ້ຮັບອະນຸຍາດ;
7. ຂັດຂວາງ ບໍ່ອໍານວຍຄວາມສະດວກ ຫຼື ບໍ່ໃຫ້ຄວາມຮ່ວມມືໃນການປະຕິບັດງານຂອງເຈົ້າໜ້າທີ່;
8. ມີການເຄື່ອນໄຫວອື່ນ ທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 23 ມາດຕະການສຶກສາອົບຮົມ**

ຜູ້ດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກ ຄໍາ ທີ່ລະເມີດມາດຕາ 22 ຂອງຂໍ້ຕົກລົງສະບັບນີ້ ເປັນຄັ້ງທໍາອິດຈະຖືກປະຕິບັດມາດຕະການສຶກສາອົບຮົມ, ກ່າວເຕືອນ ຈາກທະນາຄານແຫ່ງ ສປປ ລາວ ພ້ອມທັງ ເຮັດບົດບັນທຶກເປັນລາຍລັກອັກສອນ.

**ມາດຕາ 24 ມາດຕະການປັບໃໝ**

ຜູ້ດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກ ຄໍາ ທີ່ໄດ້ຖືກປະຕິບັດມາດຕະການສຶກສາອົບຮົມແລ້ວ ແຕ່ຍັງສືບຕໍ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ນໍາເຂົ້າ-ສົ່ງອອກ ຄໍາ ແຕ່ລະຄັ້ງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ຫ້າລ້ານ (5.000.000) ກີບ ຕໍ່ຄັ້ງ;

2. ເປີດບັນຊີເງິນຝາກຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກທະນາຄານແຫ່ງ ສປປ ລາວ ຈະຖືກປັບໃໝ ຊາວລ້ານ (20.000.000) ກີບ;
3. ໃຫ້ບໍລິການ ຫຼື ເປັນທີ່ປຶກສາການຊື້-ຂາຍ ດັດສະນີຄຳ ຢູ່ຕະຫຼາດສາກົນໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ສາມສິບລ້ານ (30.000.000) ກີບ, ໃນກໍລະນີທີ່ຜູ້ດຳເນີນທຸລະກິດໃຫ້ ທັງບໍລິການ ແລະ ເປັນທີ່ປຶກສາ ຊື້-ຂາຍ ດັດສະນີຄຳ ຈະຖືກປັບໃໝ ຫ້າສິບລ້ານ (50.000.000) ກີບ;
4. ໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ໝົດອາຍຸເກີນ 60 ວັນ ຈະຖືກປັບໃໝ ສິບລ້ານ (10.000.000) ກີບ ຕໍ່ຄັ້ງ;
5. ມອບໃບອະນຸຍາດດຳເນີນທຸລະກິດນຳເຂົ້າ-ສົ່ງອອກ ຄຳ ຂອງຕົນໃຫ້ບຸກຄົນອື່ນນຳໃຊ້ ເພື່ອຈຸດປະສົງໃດກໍ່ຕາມ ຈະຖືກປັບໃໝ ຊາວລ້ານ (20.000.000) ກີບ ຕໍ່ຄັ້ງ;
6. ປ່ຽນສະຖານທີ່ຕັ້ງບໍລິສັດໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ສິບລ້ານ (10.000.000) ກີບ ຕໍ່ຄັ້ງ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

### ມາດຕາ 25 ການຈັດຕັ້ງປະຕິບັດ

ກົມນະໂຍບາຍເງິນຕາ ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນ.

ຜູ້ທີ່ສະເໜີຂໍອະນຸຍາດ ແລະ ຜູ້ທີ່ໄດ້ຮັບອະນຸຍາດ ດຳເນີນທຸລະກິດ ນຳເຂົ້າ - ສົ່ງອອກ ຄຳ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 26 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ລະບຽບການສ້າງຕັ້ງ ແລະ ຄຸ້ມຄອງບໍລິສັດນຳເຂົ້າ-ສົ່ງອອກ ວັດຖຸມີຄ່າ ສະບັບເລກທີ 01/ທຫລ, ລົງວັນທີ 15 ພຶດສະພາ 2007.

ບັນດາຂໍ້ຕົກລົງ ຫຼື ລະບຽບການໃດທີ່ນຳໃຊ້ໃນເມື່ອກ່ອນ ຫາກຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສອນໄຊ ສິດພະໄຊ